ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

0419

ເລກທີ ............./

ນະຄອນຫຼວງວຽງຈັນ, ວັນທີ.....13 MAR 2015.....

**ຄຳສັ່ງ**

**ຂອງ ລັດຖະມົນຕີ**

**ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດ ໃນ ການກວດກາ ແລະ ຢັ້ງຢືນສຸຂານາໄມພືດ ສຳລັບ ພືດ ແລະ ຜະລິດຕະພັນພືດ ສົ່ງອອກ ໄປຍັງ ບັນດາປະເທດສະຫະພາບເອີຣົບ (EU)**

**ເຖິງ:** ທ່ານ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ທຸກພາກສ່ວນ ທີ່ ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງການພືດ ສະບັບເລກທີ 06/ສພຊ, ລົງວັນທີ 09/12/2008.
- ອີງຕາມ ດຳລັດ ແນະນຳປະຕິບັດ ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 229/ລບ, ລົງວັນທີ 31/05/2012.
- ອີງຕາມ ແຈ້ງການ ຂອງຄະນະກຳມະທິການ ອີຢູ ກ່ຽວກັບ ສຸຂະພາບ ແລະ ຜູ້ຊົມໃຊ້ ສະບັບເລກທີ (2015) 709661 , ລົງວັນທີ 19/02/2015 (Ref. Ares(2015)709661 - 19/02/2015).
- ອີງຕາມ ບົດລາຍງານ ຂອງກົມປູກຝັງ ສະບັບເລກທີ 024/ກປຝ, ລົງວັນທີ 27/02/2015.

ເພື່ອສ້າງຄວາມເຊື່ອໝັ້ນ ແລະ ປົກປ້ອງພາບພົດຂອງຜະລິດຕະພັນກະສິກຳ ແລະ ປ່າໄມ້ ເວົ້າລວມ, ເວົ້າສະເພາະການຜະລິດພືດຜັກເປັນສິນຄ້າ ຢູ່ ສປປ ລາວ ທີ່ ກຳລັງມີທ່າອ່ຽງສົ່ງອອກໄປຕ່າງປະເທດ ນັບມື້ນັບຂະຫຍາຍໂຕ ຊຶ່ງເປັນທີ່ຍອມຮັບ ຂອງ ຕະຫຼາດ ພາກພື້ນ ແລະ ສາກົນ. ເພື່ອຫຼີກເວັ້ນຜົນກະທົບ ຕໍ່ ຜະລິດຕະພັນພືດຜັກ ຂອງ ສປປ ລາວ ໄປຍັງ ບັນດາປະເທດສະຫະພາບເອີຣົບ ພ້ອມທັງຮັບປະກັນການປະຕິບັດຕາມມາດຕະຖານສາກົນ ດ້ານມາດຕະການສຸຂານາໄມພືດ ຂອງສົນທິສັນຍາປ້ອງກັນພືດສາກົນ (ISPMs, IPPC) ແລະ ລະບຽບການນຳເຂົ້າດ້ານສຸຂານາໄມພືດ ຂອງສະຫະພາບເອີຣົບ ຫຼື ອີຢູ.

**ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:**

1. ມອບໃຫ້ ກົມປູກຝັງ ອອກແຈ້ງການ, ສ້າງຄູ່ມືວິຊາການ ກ່ຽວກັບ ຫລັກການ ແລະ ວິທີການດ້ານສຸຂານາໄມພືດ ສຳລັບ ການສົ່ງອອກ ພືດ, ຜະລິດພັນພືດ ໄປຍັງ ບັນດາປະເທດສະຫະພາບເອີຣົບ,ຈັດກອງປະຊຸມວິຊາການ, ທັດສະນະສຶກສາ ເພື່ອຖອດຖອນບົດຮຽນ ແລະ ປະສົບປະການ ກັບ ຕ່າງປະເທດ ໂດຍສະເພາະແມ່ນ ສສ ຫວຽດນາມ, ລາຊະອານາຈັກໄທ, ພ້ອມທັງຝຶກອົບຮົມ, ເຜີຍແຜ່ ແລະ ແນະນຳວິທີການຈັດຕັ້ງປະຕິບັດ ໂດຍໃຫ້ລົງເລິກແຕ່ລະມາດຕະການລະອຽດໃຫ້ສອດຄ່ອງຕາມມາດຕະຖານສາກົນດ້ານມາດຕະການສຸຂານາ